# ພາກທີ 2. ບັນດາໝວດ ແລະ ບົດຝຶກຫັດ ການຝຶກອົບຮົມຕ່າງໆ







# ໝວດທີ 1
# ພື້ນຖານກ່ຽວກັບ ບົດບາດຍິງຊາຍ ແລະ ການປະກອບກິດຈະການ



# ໝວດທີ 1.1
# ພາກສະເໜີກ່ຽວກັບຕາຕະລາງການຝຶກອົບຮົມ ແລະ ແນະນໍາຜູ້ເຂົ້າຮ່ວມ

## ເນື້ອໃນຕົ້ນຕໍ

ໝວດທໍາອິດຂອງຊຸດຝຶກອົບຮົມ ໄດ້ວາງທິດທາງສໍາລັບການຮຽນຮູ້ທີ່ມີປະສິດທິຜົນ ໂດຍຜ່ານເຕັກນິກການຝຶກອົບຮົມແບບມີສ່ວນຮ່ວມ ຕັ້ງແຕ່ເບື້ອງຕົ້ນຂອງຊຸດຝຶກອົບຮົມແຕ່ລະຊຸດ. ຈຸດປະສົງຂອງຊຸດຝຶກອົບຮົມ, ຕາຕະລາງລະອຽດ ແລະ ຕາຕະລາງເວລາ ຈໍາເປັນຕ້ອງໄດ້ຕົກລົງກັນ. ຜູ້ເຂົ້າຮ່ວມຈະແນະນໍາຕົນເອງ ແລະ ຫລິ້ນເກມເພື່ອສ້າງຄວາມລຶ້ງເຄີຍ ເຊິ່ງໃນນັ້ນ ເຂົາເຈົ້າຖືກສະເໜີໃຫ້ສົມມຸດຕົວເອງວ່າເປັນເພດກົງກັນຂ້າມ. ສິ່ງນີ້ ຊ່ວຍຫລຸດຜ່ອນບັນຍາກາດທີ່ເຄັ່ງຂຶມ ແລະ ມີລັກສະນະທາງການລົງ ແລະ ເຮັດໃຫ້ທີມງານຝຶກອົບຮົມ ເຫັນພາບລວມ ກ່ຽວກັບຈິດສໍານຶກດ້ານບົດບາດຍິງຊາຍຂອງຜູ້ເຂົ້າຮ່ວມໄດ້ຢ່າງໄວວາ. ລາຍການຂອງຄວາມຄາດຫວັງ ແລະ ການປະກອບສ່ວນຂອງຜູ້ເຂົ້າຮ່ວມ ຈະເຮັດໃຫ້ທີມງານຝຶກອົບຮົມສາມາດປັບຕາ ຕະລາງ ການຝຶກອົບຮົມ ໃຫ້ເຂົ້າກັບຄວາມຈໍາເປັນຂອງເຂົາເຈົ້າ.

## ຈຸດປະສົງ

ພາກສະເໜີພາກນີ້ ມີຈຸດປະສົງເພື່ອວາງທິດທາງ ແລະສ້າງບັນຍາກາດການຮໍ່າຮຽນທີ່ມີລັກສະນະຊຸກຍູ້. ມັນ ຍັງສ້າງຄວາມເຂົ້າໃຈເບື້ອງຕົ້ນກ່ຽວກັບ ຈຸດປະສົງໂດຍລວມຂອງຊຸດຝຶກອົບຮົມ ກ້າວໄປຂ້າງໜ້າ ແລະ ວິທີການທີ່ເນັ້ນໃສ່ການປະຕິບັດ ແລະ 'ການຮຽນຈາກການເຮັດຕົວຈິງ' ແກ່ຜູ້ເຂົ້າຮ່ວມ ໂດຍຜ່ານວົງຈອນການຮຽນຮູ້ຈາກປະສົບການ ເຊິ່ງຈະໄດ້ນໍາມາໃຊ້ຢ່າງເປັນລະບົບໃນຕະຫລອດໄລຍະການຝຶກອົບຮົມ.

## ບົດຝຶກຫັດຕ່າງໆ

1. ພາກສະເໜີ: ແມ່ນຫຍັງ, ແນວໃດ ແລະ ແມ່ນໃຜ.
2. ຈັດໃຫ້ສອດຄ່ອງກັບຄວາມຄາດຫວັງ ແລະ ການປະກອບສ່ວນ.

# ບົດຝຶກຫັດທີ 1. ພາກສະເໜີ: ແມ່ນຫຍັງ, ແນວໃດ ແລະ ແມ່ນໃຜ

## ຈຸດປະສົງ

- ເພື່ອສະເໜີຈຸດປະສົງຕ່າງໆ, ເນື້ອໃນ ແລະ ໂຄງສ້າງຂອງຊຸດຝຶກອົບຮົມ.
- ເພື່ອແນະນຳຜູ້ເຂົ້າຮ່ວມຮູ້ຈັກກັນແລະກັນ.

## ການຈັດວາງຫ້ອງ

ຈັດໂຕະ ແລະ ຕັ່ງນັ່ງເປັນຮູບໂຕ U ຫລື ໂຕະ ແລະ ຕັ່ງເປັນວົງມົນສຳລັບຜູ້ເຂົ້າຮ່ວມ. ບໍ່ໃຫ້ຈັດເປັນຄືຫ້ອງ ຮຽນ.

## ອຸປະກອນ ແລະ ການກະກຽມເອກະສານແຈກຢາຍ

ຄວນຈະກຽມແຟ້ມເອກະສານໄວ້ສຳລັບຜູ້ເຂົ້າຮ່ວມທຸກຄົນ ເຊິ່ງລວມມີເອກະສານດັ່ງນີ້:

- ເອກະສານຂໍ້ມູນກ່ຽວກັບ 'ກ້າວໄປຂ້າງໜ້າ'.
- ຕາຕະລາງແຜນການຝຶກອົບຮົມ ທີ່ກຽມພ້ອມໄວ້ສຳລັບຊຸດຝຶກອົບຮົມແຕ່ລະຊຸດ.
- ລາຍຊື່ຜູ້ເຂົ້າຮ່ວມກຽມໄວ້ສຳລັບຊຸດຝຶກອົບຮົມແຕ່ລະຊຸດ.

## ໄລຍະເວລາ

60 ນາທີ.

## ແຜ່ນໃສ ແລະ ເຈັ້ຍຂາວໃຫຍ່

- ຮູບພາບເຮືອນທຸລະກິດກຽມໃສ່ແຜນໃສ, ຫລື ກຽມໃສ່ກະດານ ຫລື ເຈັ້ຍຂາວໃຫຍ່.
- ເກມແນະນຳຊື່.
- ວົງຈອນການຮຽນຮູ້ຈາກປະສົບການ.

## ບົດສອນ

**ບາດກ້າວທີ 1** - 20 ນາທີ

ແນະນຳເນື້ອໃນຕົ້ນຕໍຂອງການຝຶກອົບຮົມ ໂດຍເວົ້າເຖິງ 4 ໝວດຕົ້ນຕໍ ແລະ ນຳໃຊ້ຮູບພາບເຮືອນທຸລະກິດ ສຳລັບໃຫ້ພາບລວມໂດຍຫຍໍ້:

**ໝວດທີ 1** **ຄວາມເຂົ້າໃຈພື້ນຖານກ່ຽວກັບ ບົດບາດຍິງຊາຍ ແລະ ຜູ້ປະກອບກິດຈະການ**

**ໝວດທີ 2** **ນັກທຸລະກິດຍິງ ແລະ ສະພາບແວດລ້ອມຂອງລາວ**

**ໝວດທີ 3** **ໂຄງການທຸລະກິດ**

**ໝວດທີ 4** **ຄົນ, ອົງກອນ ແລະ ການບໍລິຫານ**

ອະທິບາຍວ່າ ໝວດເຫລົ່ານີ້ກວມເອົາດ້ານຕ່າງໆທີ່ເປັນຕົ້ນຕໍຂອງບົດບາດຍິງຊາຍ ແລະ ການປະກອບກິດຈະການ ທີ່ແນໃສ່ຍົກສູງທ່າແຮງຂອງແມ່ຍິງ ໃນການສ້າງລາຍຮັບຈາກລະດັບທີ່ພໍກຸ້ມກິນ ມາເປັນການສ້າງລາຍຮັບທີ່ມີກຳໄລ ແລະ ມີການພັດທະນາທຸລະກິດ. ຜູ້ເຂົ້າຮ່ວມຈະຊອກຫລາຍໆວິທີເພື່ອກະກຽມໂຄງການທຸລະກິດ, ດຳເນີນ ແລະ ຄຸ້ມຄອງບໍລິຫານທຸລະກິດ ບໍ່ວ່າຈະແມ່ນໃນຮູບແບບທຸລະກິດສ່ວນບຸກຄົນ, ທຸລະກິດຄອບຄົວ ຫລື ທຸລະກິດຂອງກຸ່ມ. ມັນບໍ່ຈຳເປັນຕ້ອງເວົ້າເນື້ອໃນລະອຽດໃນຂັ້ນນີ້ເທື່ອ.

ແນະນຳຈຸດປະສົງ ຂອງຊຸດຝຶກອົບຮົມ (ປັບດັດຈາກຈຸດປະສົງການຮຽນຮູ້ຂອງຊຸດຝຶກອົບຮົມ ກ້າວໄປຂ້າງໜ້າ ສຳລັບແມ່ຍິງໃນວິສາຫະກິດ ເຊິ່ງມີດັ່ງລຸ່ມນີ້):

- ເພື່ອສົ່ງເສີມການເພີ່ມອຳນາດດ້ານເສດຖະກິດ ແລະ ສັງຄົມໃຫ້ແກ່ແມ່ຍິງ ໃນບັນດາກຸ່ມແມ່ຍິງທີ່ມີລາຍຮັບຕໍ່າ, ແລະ ເພື່ອເຂົ້າໃຈເຫດຜົນໃນການໃຫ້ໂອກາດທີ່ເທົ່າທຽມກັນແກ່ແມ່ຍິງ ແລະ ຜູ້ຊາຍ ໃນການພັດທະນາວິສາຫະກິດ.
- ເພື່ອເຂົ້າໃຈກ່ຽວກັບຄວາມສຳຄັນໃນການມີທັດສະນະທຸລະກິດ ໃນການສ້າງລາຍຮັບຂະໜາດນ້ອຍ ແລະ ໃນທຸລະກິດຂອງແມ່ຍິງທີ່ມີລາຍຮັບຕໍ່າ ແລະ ຄອບຄົວຂອງເຂົາເຈົ້າ.
- ເພື່ອເພີ່ມຂີດຄວາມສາມາດຂອງຄູຝຶກ ໃນການໃຫ້ການຝຶກອົບຮົມແບບເນັ້ນໃສ່ການປະຕິບັດຕົວຈິງ, ແບບມີສ່ວນຮ່ວມ ກ່ຽວກັບທັກສະການຄຸ້ມຄອງບໍລິຫານທຸລະກິດຂັ້ນພື້ນຖານ ແລະ ໃຫ້ຄຳແນະນຳທີ່ແທດເໝາະກັບຕົວຈິງ ກ່ຽວກັບການພັດທະນາທຸລະກິດ ໃຫ້ແກ່ແມ່ຍິງທີ່ມີລາຍຮັບຕໍ່າ ແລະ ຄອບຄົວຂອງເຂົາເຈົ້າ.

ເນັ້ນໜັກຄວາມສຳຄັນຂອງການໃຫ້ໂອກາດ ແລະ ຊ່ອງທາງທີ່ເທົ່າທຽມກັນໃຫ້ແກ່ຜູ້ຊາຍ ແລະ ແມ່ຍິງໃນວິສາຫະກິດ, ແລະ ຊີ້ໃຫ້ເຫັນວ່າ ເປັນຫຍັງຈຶ່ງມີຄວາມສຳຄັນຕ້ອງໄດ້ສຸມໃສ່ຄວາມຈຳເປັນ ແລະ ໂອກາດສຳລັບແມ່ຍິງໃນວິສາຫະກິດ. ໃຫ້ເວົ້າຫຍໍ້ໆ. ບໍ່ຄວນບັນລະຍາຍຍາວໆ. ໃຫ້ຍົກຕົວຢ່າງບາງອັນ ກ່ຽວກັບຈຸດເສຍປຽບ ທີ່ແມ່ຍິງຈາກກຸ່ມຜູ້ມີລາຍຮັບຕໍ່າໃນປະເທດປະເຊີນຢູ່ ແລະ ອ້າງອີງໄປເຖິງເປົ້າໝາຍການພັດທະນາແຫ່ງຊາດ ກ່ຽວກັບການຍົກສູງຄວາມກ້າວໜ້າຂອງທຸກຄົນໃນສັງຄົມ. ແນະນຳພາບລວມໂດຍຫຍໍ້ ກ່ຽວກັບຕາຕະລາງການຝຶກອົບຮົມ ໃຫ້ແກ່ຜູ້ເຂົ້າຮ່ວມ ແລະ ອະທິບາຍເນື້ອໃນຕົ້ນຕໍຂອງມັນ, ບໍ່ຄວນເວົ້າ ລາຍລະອຽດເທື່ອ. ແຈ້ງໃຫ້ທຸກຄົນຮູ້ວ່າ ບັນດາບົດຝຶກຫັດຕ່າງໆ ແມ່ນມີຄວາມຍືດຍຸ່ນ ແລະ ສາມາດປັບດັດໄດ້ ເພື່ອໃຫ້ເຂົ້າກັບຄວາມຈຳເປັນສະເພາະ ຫລື ບູລິມະສິດຕ່າງໆ ທີ່ອາດເກີດຂຶ້ນໃນລະຫວ່າງ ການຝຶກອົບຮົມບົດຕ່າງໆ.

**ບາດກ້າວທີ 2** - 20 ນາທີ.

ເຊີນຜູ້ເຂົ້າຮ່ວມ ໃຫ້ເຂົ້າຮ່ວມໃນເກມແນະນຳຊື່. ສະເໜີໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນແນະນຳຕົນເອງ ໂດຍໃຫ້ ເວລາ 1 - 2 ນາທີ ຕໍ່ຄົນ ແນະນຳໃຫ້ກຸ່ມໂດຍລວມໃນລັກສະນະຕໍ່ໄປນີ້:

- **ຊື່** : ຜູ້ເຂົ້າຮ່ວມແຕ່ລະຄົນແນະນຳຊື່ຂອງຕົນເອງ ແລະ ແນະນຳວ່າຢາກໃຫ້ ໝູ່ເອີ້ນຊື່ຕົນເອງແນວໃດໃນລະຫວ່າງການຝຶກອົບຮົມ.
- **ຕຳແໜ່ງ ຫລື ວຽກງານ** : ຜູ້ເຂົ້າຮ່ວມແຕ່ລະຄົນອະທິບາຍວ່າ ຕົນເອງເຮັດວຽກຫຍັງເພື່ອລ້ຽງຊີບ.
- **ໜ້າທີ່ຮັບຜິດຊອບຕົ້ນຕໍ** : ຜູ້ເຂົ້າຮ່ວມແຕ່ລະຄົນອະທິບາຍໜ້າທີ່ຮັບຜິດຊອບຕົ້ນຕໍຂອງຕົນເອງ.
- **ການສະຫລັບບົດບາດ** : ຜູ້ເຂົ້າຮ່ວມແຕ່ລະຄົນ ຈະສົມມຸດຕົນເອງເຊິ່ງມີບົດບາດເປັນເພດກົງກັນຂ້າມ ແລະ ຕອບຄຳຖາມລຸ່ມນີ້:

| *ໝາຍເຫດ* : **ສຳລັບກຸ່ມປະສົມ** | *ໝາຍເຫດ* : **ສຳລັບກຸ່ມແມ່ຍິງລ້ວນ:** **ຜູ້ເຂົ້າຮ່ວມແຕ່ລະຄົນຕອບຄຳຖາມ 2 ຂໍ້ລຸ່ມນີ້:** |
|---|---|
| **ສຳລັບແມ່ຍິງ:** *ຖ້າຫາກຂ້ອຍແມ່ນຜູ້ຊາຍ ຂ້ອຍສາມາດ/ຢາກ …* | ໃນຖານະເປັນແມ່ຍິງ ຂ້ອຍສາມາດ/ຢາກ … |
| **ສຳລັບຜູ້ຊາຍ:** *ຖ້າຫາກຂ້ອຍແມ່ນແມ່ຍິງ ຂ້ອຍສາມາດ/ຢາກ …* | ຖ້າເປັນຜູ້ຊາຍ ຂ້ອຍສາມາດ/ຢາກ … |

ເວລາທີ່ແຕ່ລະຄົນໄດ້ແນະນຳຕົວເອງໝົດແລ້ວ ໃຫ້:

- ຂອບໃຈນຳຜູ້ເຂົ້າຮ່ວມສຳລັບການແນະນຳຕົນເອງຕໍ່ກຸ່ມ.
- ເວົ້າກ່ຽວກັບປະສົບການໂດຍລວມໃນດ້ານບວກ ຂອງຜູ້ເຂົ້າຮ່ວມ.
- ຊີ້ໃຫ້ເຫັນວ່າ ມັນມີທັງຄວາມຄ້າຍຄືກັນ ແລະ ຄວາມແຕກຕ່າງຂອງຜູ້ເຂົ້າຮ່ວມ ດ້ານທັດສະນະຂອງເຂົາເຈົ້າຕໍ່ກັບບົດບາດ ແລະ ແນວຄວາມຄິດຕ່າງໆ ກ່ຽວກັບແມ່ຍິງ ແລະ ຜູ້ຊາຍ ແລະ ສິ່ງທີ່ເຂົາເຈົ້າ
- ສາມາດເຮັດໄດ້ ແລະ ບໍ່ສາມາດເຮັດໄດ້. ດ້ວຍເຫດນີ້ ຊຸດຝຶກອົບຮົມນີ້ ຈຶ່ງບໍ່ແມ່ນພຽງແຕ່ກ່ຽວກັບຜູ້ປະກອບກິດຈະການ ແລະ ການປະກອບກິດຈະການເທົ່ານັ້ນ, ແຕ່ແມ່ນກ່ຽວກັບບົດບາດຍິງຊາຍ ແລະ ການປະກອບ ການນຳອີກ.

**ບາດກ້າວທີ 3** - 20 ນາທີ.

ນຳສະເໜີກ່ຽວກັບວິທີການການຝຶກອົບຮົມ ວ່າເປັນວິທີການແບບມີສ່ວນຮ່ວມ, ເນັ້ນໃສ່ການປະຕິບັດຕົວຈິງ, ເປັນວິທີການຮຽນຮູ້ຈາກຕົວຈິງຂອງຜູ້ໃຫຍ່. ເຊີນຊວນໃຫ້ຜູ້ເຂົ້າຮ່ວມແລກປ່ຽນປະສົບການກ່ຽວກັບວິທີຮຽນຂອງເຂົາເຈົ້າຜ່ານມາ, ແລະ ເຂົາເຈົ້າຮູ້ຫຍັງແດ່ກ່ຽວກັບວິທີການຝຶກອົບຮົມ ແບບມີລັກສະນະຕົວຈິງ, ຮຽນຮູ້ ຈາກການເຮັດຕົວຈິງ. ໃນຊຸດຝຶກອົບຮົມຄູຝຶກ ສະເໜີໃຫ້ຜູ້ເຂົ້າຮ່ວມມີຈາລະນາ

ເບິ່ງຂໍ້ໄດ້ປຽບ ແລະ ຂໍ້ເສັຍ ປຽບຕ່າງໆ ຂອງວິທີການຝຶກອົບຮົມແບບທົ່ວໄປ (ການບັນລະຍາຍ ແລະ ການທ່ອງຈຳ) ເມື່ອທຽບກັບເຕັກ ນິກການຝຶກອົບຮົມແບບມີສ່ວນຮ່ວມ.

ອະທິບາຍວົງຈອນການຮຽນຮູ້ຈາກປະສົບການ (ນຳໃຊ້ແຜນໃສ ຫລື ເຈັ້ຍຂາວໃຫຍ່): ຄົນເຮົາຮຽນຮູ້ໄດ້ດີກວ່າໝູ່ໝົດຈາກ 'ການເຮັດຕົວຈິງ', ບໍ່ແມ່ນຈາກ 'ຜູ້ອື່ນບອກ' ຫລື ຟັງການບັນລະຍາຍ. ໃນຊີວິດປະຈຳວັນ ຄົນເຮົາຜ່ານວົງຈອນການຮຽນຮູ້ຈາກປະສົບການຕະຫລອດເວລາ. ວົງຈອນນັ້ນ ເປັນຂະບວນການຕໍ່ເນື່ອງ ເຊິ່ງສ້າງຂຶ້ນ ຈາກການຮວບຮວມປະສົບການຜ່ານມາທັງໝົດ. ການຮຽນຮູ້ຈາກປະສົບການໃນການຝຶກ ອົບຮົມໝາຍເຖິງ: ເຮັດບົດຝຶກຫັດ ແລະ ຈາກນັ້ນກໍ່ຖອດຖອນຂໍ້ຄວາມສຳຄັນຕ່າງໆ, ຂໍ້ຮຽນຮູ້ຕ່າງໆ ຫລື ບົດຮຽນຕ່າງໆ ສຳລັບນຳເອົາໄປໃຊ້ໃນອະນາຄົດ ນຳກັນ, ຫລາຍກວ່າຈະເປັນຮັບເອົາຂໍ້ຄວາມຈາກບົດຮຽນ ແຕ່ຢ່າງດຽວ.

ບາດກ້າວທີ 1. ສິ່ງທີ່ໄດ້ເຮັດ: ປະເຊີນກັບຄວາມຄິດ ຫລື ສິ່ງທ້າທ້າຍໃໝ່.

ບາດກ້າວທີ 2. ແລກປ່ຽນປະສົບການ ແລະ ຜົນທີ່ໄດ້ຮັບຈາກບາດກ້າວທີ 1: ສະເໜີໃຫ້ຜູ້ເຂົ້າຮ່ວມສົນທະນາກ່ຽວກັບສິ່ງທີ່ເກີດຂຶ້ນ ແລະ ແລກປ່ຽນຂໍ້ມູນຂ່າວສານ ວ່າເຂົາເຈົ້າໄດ້ເຮັດຫຍັງ. ໝາກຜົນທັງໝົດຈາກການສົນທະນາ ແມ່ນສະແດງໃຫ້ເຫັນປະຈັກຕາແກ່ໝົດທຸກຄົນກ່ອນຈະຕີຄວາມໝາຍ.

ບາດກ້າວທີ 3. ວິເຄາະ: ທົບທວນປະສົບການ ແລະ ຖອດຖອນບົດຮຽນຈາກປະສົບການດັ່ງກ່າວ ເພື່ອເກັບກຳເອົາສິ່ງທີ່ເກີດຂຶ້ນສຳລັບບາດກ້າວ ທີ 1: 'ສິ່ງທີ່ໄດ້ເຮັດ', ຕົວຢ່າງ: ເມື່ອຜະລິດ ຫລື ຂາຍຜະລິດຕະພັນ ຫລື ການບໍລິການ.

ບາດກ້າວທີ 4. ຂໍ້ຄວາມບົດຮຽນສຳຄັນສຳລັບອະນາຄົດ: ອະທິບາຍ 'ທິດສະດີ' ຂອງການປະຕິບັດນັ້ນ, ດຶງເອົາບົດຮຽນ ແລະ ຂໍ້ສະຫລຸບຕ່າງໆອອກມາຈາກສິ່ງທີ່ເກີດຂຶ້ນ. ຕົວຢ່າງ: ເປັນຫຍັງຍອດຂາຍຈຶ່ງບໍ່ໄດ້ຕາມທີ່ຕ້ອງການ (ຈາກບາດກ້າວທີ 1), ແມ່ນຫຍັງທີ່ຜິດພາດໄປ, ແມ່ນຫຍັງ ຄືສິ່ງທີ່ບໍ່ຄາດຝັນເກີດຂຶ້ນ?

ບາດກ້າວທີ 5. ການນຳເອົາບົດຮຽນໄປປະຕິບັດໃນຊີວິດຕົວຈິງ. ໂດຍຜ່ານວົງຈອນການຮຽນຮູ້ຈາກປະສົບການ ໃນຊຸດຝຶກອົບຮົມດ້ານການພັດທະນາວິສາຫະກິດ ມັນໃຫ້ໂອກາດແກ່ຜູ້ເຂົ້າຮ່ວມ ໄດ້ປັບປຸງທັກສະການແກ້ໄຂບັນຫາຢ່າງເປັນລະບົບ ໃນສະພາບແວດລ້ອມທີ່ມີການປົກປ້ອງ. ເຂົາເຈົ້າຮຽນທົດລອງ ແລະ ຮັບຮູ້ເຖິງຂັບພະຍາກອນຂອງຕົນເອງ ເພື່ອວ່າເຂົາ ເຈົ້າຈະສາມາດປັບຕັດ ແລະ ຄຸ້ມຄອງບໍລິຫານຄວາມຄິດ ແລະ ໂຄງການຕ່າງໆຂອງເຂົາເຈົ້າ ສຳລັບການປະກອບກິດຈະການ ຂອງຕົນໃນອະນາຄົດ.

ຍົກຕົວຢ່າງຕົວຈິງ ສຳລັບແຕ່ລະບາດກ້າວຂອງວົງຈອນ ໂດຍນຳໃຊ້ບົດຝຶກຫັດທີ 1 ຫລື ຫລາຍໆບົດໃນຄູ່ມື ທີ່ວນີ້:

ບົດຝຶກຫັດທີ 1 **ພາກສະເໜີ: ແມ່ນຫຍັງ, ແນວໃດ ແລະ ແມ່ນໃຜ**

ບາດກ້າວທີ 1. ຜູ້ເຂົ້າຮ່ວມ ຈະຫລິ້ນເກມ ຫລື ບົດຝຶກຫັດຕົວຈິງອີກບົດໜຶ່ງ ເຊັ່ນ: ການເຮັດຍຳ ຫລື ສ້າງ ທຳຄອຍດ້ວຍເຈັ້ຍ.

ບາດກ້າວທີ 2. ຜູ້ເຂົ້າຮ່ວມຈະແລກປ່ຽນຄວາມຮູ້ສຶກ ແລະ ຂໍ້ສັງເກດການຂອງເຂົາເຈົ້າເຊັ່ນ: ການສະແດງບົດບາດຈຳລອງເປັນນັກທຸລະກິດຍິງນັ້ນ ງ່າຍ ຫລື ບໍ່? ສິ່ງໃດທີ່ທ່ານເຫັນວ່າມັນຍາກ? ຜູ້ເຂົ້າຮ່ວມ ຈະສະແດງໃຫ້ເຫັນຜົນງານຂອງເຂົາເຈົ້າ, ເຊັ່ນ: ຕາຕະລາງກ່ຽວກັບການຕັດສິນໃຈໃນການຊື້, ຫລື ຜົນໄດ້ຮັບຈາກການຜະລິດທີ່ກະກຽມພາຍໃນກຸ່ມນ້ອຍ.

ບາດກ້າວທີ 3. ຜູ້ເຂົ້າຮ່ວມຈະວິເຄາະປະສົບການທີ່ເຂົາເຈົ້າໄດ້ຜ່ານ, ຕົວຢ່າງ: ເຂົາເຈົ້າຈະສົນທະນາປະ ເດັນຕ່າງໆເຊັ່ນ: ບາດກ້າວຕົ້ນຕໍໃນການເຮັດຍຳມີຫຍັງແດ່?

ບາດກ້າວທີ 4. ຜູ້ເຂົ້າຮ່ວມຈະສົນທະນາກ່ຽວກັບ ບາດກ້າວຕົ້ນຕໍຕ່າງໆ ຕົວຢ່າງໃນການເຮັດຍຳເຊິ່ງຈະສາມາດນຳໄປໃຊ້ກັບຂະບວນການຜະລິດຂອງທຸລະກິດ ຫລື ໃນໂຄງການທຸລະກິດຂອງເຂົາເຈົ້າໄດ້ຄືແນວໃດ.

ບາດກ້າວທີ 5. ຜູ້ເຂົ້າຮ່ວມຈະນຳໃຊ້ຄວາມຮູ້ທີ່ໄດ້ຮັບຈາກຊຸດຝຶກອົບຮົມ ເພື່ອນຳໄປເຮັດຕົວຈິງໃນຊຸມຊົນຂອງຕົນ.

## ຫລັກສູດ ບົດບາດຍິງຊາຍ ແລະ ການປະກອບກິດຈະການ ຂອງ ILO ລວມເຂົ້າກັນເປັນ: ກ້າວໄປຂ້າງໜ້າສຳລັບແມ່ຍິງໃນວິສາຫະກິດ

## ເອກະສານຂໍ້ມູນ

### 1. ຄວາມເປັນມາ ແລະ ເຫດຜົນ

ໃນອາຊີອາຄະເນ ຫລາຍອົງການຈັດຕັ້ງສົ່ງເສີມກິດຈະກຳເສດຖະກິດຂອງແມ່ຍິງ, ໂດຍສະເພາະ ໃນບັນດາກຸ່ມຜູ້ດ້ອຍໂອກາດ, ມີຈຸດປະສົງແນໃສ່ການສ້າງລາຍຮັບ, ການຫລຸດຜ່ອນຄວາມທຸກຍາກ ແລະ ການເພີ່ມອຳນາດໃຫ້ແກ່ແມ່ຍິງ. ເຖິງແນວໃດກໍ່ຕາມ, ເຄື່ອງມືການຝຶກອົບຮົມທີ່ມີຢູ່ ສຳລັບແມ່ຍິງໃນວິສາຫະກິດນັ້ນ ສ່ວນຫລາຍແມ່ນຍັງມີບັນຫາຍ້ອນ ວິທີການແມ່ນມີລັກສະນະແບບການໃຫ້ສະຫວັດດີການ, ແບບທີ່ເນັ້ນໜັກໃສ່ຄວາມຮູ້ ທາງດ້ານທຸລະກິດໃນລະດັບສູງໂພດ ແລະ ຂາດຄວາມເອົາໃຈໃສ່ຕໍ່ຂໍ້ຫຍຸ້ງຍາກ ແລະ ຄວາມຈຳເປັນກ່ຽວກັບ ບົດບາດຍິງຊາຍ. ອົງການດັ່ງກ່າວ ມັກຈະມອງຂ້າມບັນຫາສະເພາະຕ່າງໆທີ່ປະເຊີນໂດຍ ຜູ້ປະກອບກິດຈະການຍິງເຈົ້າຂອງວິສາຫະກິດຂະໜາດນ້ອຍໆ ທີ່ດຳເນີນ ທຸລະກິດເພື່ອຄວາມຢູ່ລອດຂອງຄອບຄົວ ຫລື ໃນລະດັບພໍກຸ້ມກິນ. ເຄື່ອງມືການຝຶກອົບຮົມກ້າວໄປຂ້າງໜ້າ ຂອງອົງການ ILO ແມ່ນແທດເໝາະກັບແມ່ຍິງທີ່ມີລາຍຮັບຕ່ຳ, ຜູ້ທີ່ມີລະດັບຄວາມຮູ້ໜັງສືຕ່ຳ ແລະ ກຳລັງ ດຳເນີນທຸລະກິດ ສ່ວນບຸກຄົນ, ທຸລະກິດຄອບຄົວ ແລະ ທຸລະກິດຂອງກຸ່ມ. ຊຸດການຝຶກອົບຮົມໄດ້ ເນັ້ນໜັກໃສ່ທັກສະ ດ້ານທຸລະກິດ ທີ່ຈຳເປັນຈາກທັດສະນະ ບົດບາດຍິງຊາຍ, ບໍ່ວ່າຈະນຳໃຊ້ສຳລັບການເລີ້ມຕົ້ນ, ການດຳເນີນ ຫລື ຄຸ້ມຄອງບໍລິຫານ ທຸລະກິດສ່ວນບຸກຄົນ, ທຸລະກິດຄອບຄົວ ຫລື ທຸລະກິດຂອງກຸ່ມ. ມັນສົ່ງເສີມການເພີ່ມອຳນາດ ໃຫ້ແກ່ແມ່ຍິງ ທັງອຳ ນາດທາງດ້ານເສດຖະກິດ ແລະ ດ້ານສັງຄົມຄຽງຄູ່ກັບເພດຊາຍໃນວິສາຫະກິດ.

### 2. ຈຸດປະສົງ ແລະ ຍຸດທະສາດ

ອົງການ ILO ມີຈຸດປະສົງ ເສີມສ້າງຂີດຄວາມສາມາດຂອງອົງກອນຄູ່ຮ່ວມງານຂອງອົງການ ILO ທີ່ສົ່ງເສີມການພັດທະນາການປະກອບກິດຈະການຂອງແມ່ຍິງ ແລະ ຄວາມສະເໝີພາບລະຫວ່າງຍິງຊາຍໃຫ້ເຂັ້ມແຂງ. ການຝຶກອົບຮົມ ແນໃສ່ ເຮັດໃຫ້ຜູ້ປະກອບກິດຈະການຍິງທີ່ມີລາຍຮັບຕ່ຳ ແລະ ຄອບຄົວຂອງເຂົາເຈົ້າ ສາມາດຍົກລະດັບຈາກການສ້າງລາຍຮັບພໍ ກຸ້ມກິນມາເປັນການພັດທະນາທຸລະກິດທີ່ມີກຳໄລ. ສ່ວນໜຶ່ງຂອງການເສີມສ້າງຂີດຄວາມສາມາດຂອງຄູ່ຮ່ວມງານ, ຫລັກສູດການຝຶກອົບຮົມກ້າວໄປຂ້າງໜ້າສຳລັບແມ່ຍິງໃນວິສາຫະກິດ ໄດ້ຖືກທົດລອງໃຊ້ ແລະ ປັບດັດ ຮ່ວມກັບເຄືອຂ່າຍຄູຝຶກດ້ານທຸລະກິດ ແລະ ດ້ານບົດບາດຍິງຊາຍໃນບັນດາປະເທດທີ່ເຂົ້າຮ່ວມມາແລ້ວ ໂດຍແນໃສ່ຂະຫຍາຍໂອກາດເຮັດວຽກທີ່ດີໃຫ້ແກ່ແມ່ຍິງ ໃນການພັດທະນາວິສາຫະກິດໃນລະດັບຄອບຄົວ ແລະ ລະດັບ ຊຸມຊົນ.

### 3. ວິທີການຝຶກອົບຮົມ ແລະ ກຸ່ມເປົ້າໝາຍ

ວິທີການຝຶກອົບຮົມ ແມ່ນແບບມີສ່ວນຮ່ວມ ແລະ ເນັ້ນໃສ່ການປະຕິບັດຕົວຈິງ ແລະ ເສີມສ້າງຈາກປະສົບການຊີວິດຕົວຈິງຂອງຜູ້ເຂົ້າຮ່ວມ. ການຝຶກອົບຮົມນີ້ ໄດ້ຖອດຖອນເອົາບົດຮຽນແຫ່ງຄວາມສຳເລັດ ມາຈາກການຝຶກອົບຮົມທີ່ມີຢູ່ປັດຈຸບັນ ແລະ ຈາກໄລຍະທີ່ຜ່ານມາ ໃຫ້ກັບກຸ່ມຄົນທີ່ມີລະດັບການຮູ້ໜັງສືຕ່ຳ ໂດຍຮວບຮວມເອົາ ຊັບພະຍາກອນ ແລະ ແນວຄວາມຄິດຕ່າງໆ ເຂົ້າກັນ ເຊິ່ງໄດ້ຮັບການຢັ້ງຢືນແລ້ວວ່າເໝາະສົມກັບແມ່ຍິງສ່ວນໃຫຍ່ຜູ້ທີ່ທຸກຍາກ ແລະ ມີລະດັບການສຶກສາສາຍ ສາມັນຕ່ຳ.

ຊຸດການຝຶກອົບຮົມ ໄດ້ຮັບການພັດທະນາສຳລັບນຳໃຊ້ ທັງການຝຶກອົບຮົມຄູຝຶກ ແລະ ສຳລັບ ການຝຶກອົບຮົມຜູ້ປະກອບການ ແລະ ລວມເອົານັກທຸລະກິດຍິງທີ່ປະສົບຜົນສຳເລັດ ແລະ ທີ່ເປັນທີ່ນັບຖື ເພື່ອຈຸດປະສົງໃຫ້ມາເປັນຕົວແບບ ແລະ ເພື່ອສ້າງເຄືອຂ່າຍ.

## 4. ເນື້ອໃນຂອງຊຸດການຝຶກອົບຮົມ

ຜູ້ປະກອບກິດຈະການຍິງທີ່ມີລາຍຮັບຕ່ຳຂາດໂອກາດໄດ້ຮັບການສຶກສາ ແລະ ການຝຶກອົບຮົມທັກສະ ແລະ ມີຄວາມໝັ້ນໃຈໃນຕົນເອງຕ່ຳ, ເຊິ່ງສິ່ງພົນໃຫ້ເຂົາເຈົ້າມີຖານະຕ່ຳໃນສັງຄົມ. ຍ້ອນແນວນັ້ນ, ການຝຶກອົບຮົມ ກ້າວໄປຂ້າງໜ້າ ຈຶ່ງສຸມໃສ່ການພັດທະນາຄວາມໝັ້ນໃຈຂອງແມ່ຍິງ, ສ້າງ 'ແນວຄິດທຸລະກິດ', ຄຸ້ມຄອງບໍລິຫານ ຄົນ, ຄວບຄຸມຄວາມສ່ຽງ ແລະ ຍາດເອົາໂອກາດຕ່າງໆ ໃນສະພາບແວດລ້ອມທຸລະກິດຂອງເຂົາເຈົ້າ. ໝວດຕ່າງໆ ຂອງການຝຶກອົບ ຮົມລວມມີ:

**ໝວດທີ 1** ພື້ນຖານກ່ຽວກັບ ບົດບາດຍິງຊາຍ ແລະ ການປະກອບກິດຈະການ: ການສົ່ງເສີມຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ວົງຈອນຊີວິດຂອງຄົນ ແລະ ວິສາຫະກິດ.

**ໝວດທີ 2** ນັກທຸລະກິດຍິງ ແລະ ສະພາບແວດລ້ອມຂອງລາວ: ການພັດທະນາຕົນເອງ ແລະ ແຜນວາດ ທຸລະກິດ.

**ໝວດທີ 3** ໂຄງການທຸລະກິດ: ແນວຄວາມຄິດທຸລະກິດ, ໂອກາດ ແລະ ສິ່ງທ້າທາຍ; ການຕະຫລາດ; ການຜະລິດ, ການບໍລິການ ແລະ ເຕັກໂນໂລຊີ; ການເງິນ.

**ໝວດທີ 4** ຄົນ, ອົງການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານຕົນເອງ ແລະ ຜູ້ອື່ນ; ການສະໜັບສະໜູນ ແລະ ເຄືອຂ່າຍທຸລະກິດ; ການວາງແຜນດຳເນີນງານ.

# ເຮືອນທຸລະກິດ



# ເກມແນະນຳຊື່ ສຳລັບກຸ່ມປະສົມ:

## ຊື່:

## ໜ້າທີ່ຮັບຜິດຊອບຕົ້ນຕໍ:

## ການສະຫລັບບົດບາດ:

- ## ສຳລັບແມ່ຍິງ:

*ຖ້າຂ້ອຍແມ່ນຜູ້ຊາຍ, ຂ້ອຍສາມາດ/ຢາກ ...*

- ## ສຳລັບຜູ້ຊາຍ:

*ຖ້າຂ້ອຍແມ່ນແມ່ຍິງ, ຂ້ອຍສາມາດ/ຢາກ...*



# ເກມແນະນຳຊື່ສຳລັບກຸ່ມແມ່ຍິງລ້ວນ:

## ຊື່:

## ໜ້າທີ່ຮັບຜິດຊອບຕົ້ນຕໍ:

## ການສະຫລັບບົດບາດ:

*ໃນຖານະເປັນແມ່ຍິງ,*
*ຂ້ອຍສາມາດ/ຢາກ...*





*ຖ້າເປັນຜູ້ຊາຍ,*
*ຂ້ອຍສາມາດ/ຢາກ...*

# ວົງຈອນການຮຽນຮູ້ຈາກປະສົບການ




ແຫລ່ງຂໍ້ມູນ: GTZ, 1998, International CEFE Manual

# ບົດຝຶກຫັດທີ 2. ຈັດໃຫ້ສອດຄ່ອງກັບຄວາມຄາດຫວັງ ແລະ ການປະກອບສ່ວນ

## ຈຸດປະສົງ

- ເພື່ອຄົ້ນຫາ ແລະ ເພື່ອໃຫ້ຈະແຈ້ງກ່ຽວກັບຄວາມຄາດຫວັງ ແລະ ການປະກອບສ່ວນຂອງຜູ້ເຂົ້າຮ່ວມ.
- ເພື່ອຮັບປະກັນວ່າ ຊຸດຝຶກອົບຮົມສອດຄ່ອງກັບຄວາມຈຳເປັນຂອງຜູ້ເຂົ້າຮ່ວມ.

## ການຈັດວາງຫ້ອງ

ຈັດໂຕະ ແລະ ຕັ່ງໃຫ້ເປັນຮູບ ໂຕ U, ຫລື ຈັດໂຕະ ແລະ ຕັ່ງເປັນວົງມົນສຳລັບຜູ້ເຂົ້າຮ່ວມ. ບໍ່ຄວນຈັດເປັນ ລັກສະນະຫ້ອງຮຽນ.

## ອຸປະກອນ ແລະ ການກະກຽມເອກະສານແຈກຢາຍ

- ບິກເຟີສ, ກະດານຟລິບຊາດ (Flipcharts) ຫລື ກະດານທີ່ຈັດເປັນຫົວຂໍ້ສຳລັບຈັດກຸ່ມບັດຄວາມ.
- ບັດຄວາມນ້ອຍສີຕ່າງໆ 2 ສີ: ຢາຍໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ ຄົນລະ 3 ບັດ ຕໍ່ ສີ.

## ໄລຍະເວລາ

30 ນາທີ.

## ໝາຍເຫດສຳລັບທີມງານຝຶກອົບຮົມ

ພາຍຫລັງບົດຮຽນຝຶກອົບຮົມບົດນີ້ຈົບແລ້ວ, ໃຫ້ຕິດບັດເຫລົ່ານີ້ໃສ່ຝາ ແລະ ຕິດໄວ້ບ່ອນທີ່ແນມເຫັນຖາວອນໃນຫ້ອງຝຶກອົບຮົມຕະຫລອດໄລຍະການຝຶກອົບຮົມ. ທີມງານຝຶກອົບຮົມຈະກັບຄືນມາເບິ່ງ ຄວາມຄາດຫວັງ ແລະ ການປະກອບສ່ວນຂອງຜູ້ເຂົ້າຮ່ວມໃໝ່ອີກ ໃນເວລາປະເມີນຜົນການຝຶກອົບຮົມ ຫລື ໃນພາກປິດ ສະຫລຸບ.

ບົດຝຶກຫັດນີ້ ໃຫ້ທ່ານໄດ້ຮັບຂໍ້ມູນທີ່ເປັນປະໂຫຍດ ເພື່ອຮັບປະກັນວ່າຊຸດຝຶກອົບຮົມປະສົບຜົນສຳເລັດ:

- ສົມທຽບຄວາມຄາດຫວັງຂອງຜູ້ເຂົ້າຮ່ວມ ກັບຕາຕະລາງຝຶກອົບຮົມຂອງທ່ານ ແລະ ກວດເບິ່ງວ່າທ່ານ ຈຳເປັນຕ້ອງປັບຕາຕະລາງເພື່ອໃຫ້ເຂົ້າກັບຄວາມຈຳເປັນຂອງເຂົາເຈົ້າບໍ່.
- ອ່ານຜ່ານການປະກອບສ່ວນຂອງຜູ້ເຂົ້າຮ່ວມ, ກວດສອບເບິ່ງວ່າ ມີພອນສະຫວັນພິເສດດ້ານໃດບໍ່ພາຍໃນກຸ່ມ, ຕົວຢ່າງ: ຜູ້ເຂົ້າຮ່ວມທີ່ມີທັກສະດ້ານການປະກອບກິດຈະການທີ່ສຳເລັດຜົນ ຫລື ມີປະສົບການດ້ານການຝຶກອົບຮົມອັນຫລວງຫລາຍ. ໃນລະຫວ່າງການຝຶກອົບຮົມ ສາມາດສະເໜີໃຫ້ຜູ້ເຂົ້າຮ່ວມເຫລົ່ານີ້ແລກປ່ຽນປະສົບການ ແລະ ຊ່ວຍສະມາຊິກກຸ່ມຜູ້ອື່ນໆ ຜູ້ເຊິ່ງຈຳເປັນຕ້ອງມີຄວາມເອົາໃຈໃສ່ ເປັນພິເສດ.

## ບົດສອນ

**ບາດກ້າວທີ 1** - 10 ນາທີ.

ອະທິບາຍວ່າ ທີມງານຝຶກອົບຮົມຈຳເປັນຕ້ອງຮູ້ກ່ຽວກັບຄວາມຄາດຫວັງຂອງຜູ້ເຂົ້າຮ່ວມ ('ເຂົາເຈົ້າຕ້ອງການຢາກຮຽນຫຍັງ?') ແລະ ກຳນົດການປະກອບສ່ວນທີ່ອາດເປັນໄປໄດ້ ('ຂ້ອຍສາມາດແລກປ່ຽນຫຍັງໄດ້ແດ່ກັບຜູ້ອື່ນ?'). ສິ່ງນີ້ ຈະຊ່ວຍຮັບປະກັນວ່າ ຊຸດຝຶກອົບຮົມນີ້ ແທດເໝາະກັບຄວາມຈຳເປັນຂອງຜູ້ເຂົ້າຮ່ວມ ແລະ ໄດ້ນຳໃຊ້ພອນສະຫວັນ ແລະ ຊັບພະຍາກອນທີ່ມີຢ່າງເຕັມສ່ວນ.

ສະເໜີໃຫ້ຜູ້ເຂົ້າຮ່ວມຂຽນຄວາມຄາດຫວັງ ແລະ ການປະກອບສ່ວນຂອງເຂົາເຈົ້າ ກ່ຽວກັບຊຸດຝຶກອົບຮົມກ້າວໄປຂ້າງໜ້ານີ້ ລົງໃນບັດສີໜຶ່ງສຳລັບຄວາມຄາດຫວັງ ແລະ ໃສ່ອີກສີໜຶ່ງ ສຳລັບການປະກອບສ່ວນ (ຢາຍບັດຄວາມແຕ່ລະສີ 3 ບັດ ຕໍ່ສີ ໃຫ້ຜູ້ເຂົ້າຮ່ວມ). ອະທິບາຍວ່າ ມີຫລັກການພື້ນຖານສຳລັບການໃຊ້ບັດຄວາມຄື:

- ຂຽນໂຕໜັງສືໃຫຍ່ຈະແຈ້ງ.
- ຂຽນພຽງແນວຄວາມຄິດດຽວ ຕໍ່ ໜຶ່ງບັດ (ຖ້າບໍ່ດັ່ງນັ້ນ ໃຫ້ຂຽນໃສ່ບັດທີ 2).
- ຂຽນເປັນຄຳເວົ້າທີ່ຈະແຈ້ງ ແລະ ເຈາະຈົງ.
- ຫລາຍສຸດບໍ່ໃຫ້ເກີນ 3 ແຖວ ຕໍ່ໜຶ່ງບັດ.
- ບໍ່ໃຫ້ຂຽນຊື່ໃສ່.

ສະແດງບັດຈຳນວນໜຶ່ງ ທີ່ກະກຽມໂດຍທີມງານຝຶກອົບຮົມ ເພື່ອສາທິດກ່ຽວກັບຂໍ້ແນະນຳການໃຊ້ບັດຄວາມຂ້າງເທິງ. ໃຫ້ເວລາແກ່ຜູ້ເຂົ້າຮ່ວມ ເພື່ອຂຽນຄວາມຄາດຫວັງ ແລະ ການປະກອບສ່ວນຂອງເຂົາເຈົ້າໃສ່ບັດຄວາມ. ຄູຝຶກຄວນເກັບເມື່ອຜູ້ເຂົ້າຮ່ວມຂຽນແລ້ວ ແລະ ຈັດບັດເຫລົ່ານັ້ນເຂົ້າກັນເປັນກຸ່ມໂດຍມີຫົວຂໍ້ ໃສ່ພ້ອມຢູ່ກະດານຟລິບຊາດ. ອາດມີຫົວຂໍ້ເຊັ່ນ: 'ບົດບາດຍິງຊາຍ', 'ຄວາມອາດສາມາດດ້ານການປະກອບການ', 'ແນວຄວາມຄິດທຸລະກິດ ຫລື ໂອກາດຕ່າງໆ', 'ທັກສະດ້ານທຸລະກິດ', 'ການຊ່ວຍເຫລືອຈາກພາຍນອກ', ອື່ນໆ. ມັນຈະເປັນປະໂຫຍດທີ່ຈະໃຫ້ມີກຸ່ມບັດໜຶ່ງພາຍໃຕ້ຫົວຂໍ້ 'ອື່ນໆ', ທີ່ຄູຝຶກເຫັນວ່າເນື້ອໃນຂອງ ບັດຄວາມນັ້ນ ນອກເໜືອຈາກຫົວຂໍ້ທີ່ກຽມໄວ້.

**ສິ່ງທີ່ຄວນລະວັງ:** ຜູ້ເຂົ້າຮ່ວມບາງຄົນອາດບໍ່ຄາດຫວັງວ່າ ຈະຖືກຖາມກ່ຽວກັບຄວາມຄາດຫວັງ ແລະ ການປະກອບສ່ວນຂອງເຂົາເຈົ້າ, ແລະ ໃນເບື້ອງຕົ້ນເຂົາເຈົ້າອາດຮູ້ສຶກຊ່ວຍຫຍັງບໍ່ໄດ້. ບາງຄົນອາດຮູ້ສຶກອາຍ ເກີນກວ່າທີ່ຈະເວົ້າເຖິງ ຄວາມຄາດຫວັງ 'ສ່ວນຕົວ'. ໃຫ້ຊຸກຍູ້ທຸກຄົນໃຫ້ເຂົ້າຮ່ວມ. ຖ້າຫາກວ່າມີບາງຄົນຂຽນ ພຽງບັດດຽວ ຫລື 2 ບັດ ກໍ່ບໍ່ເປັນຫຍັງ.

**ບາດກ້າວທີ 2** - 20 ນາທີ.

ສົນທະນາກ່ຽວກັບບັດຄວາມຄາດຫວັງ ແລະ ການປະກອບສ່ວນໂດຍຫຍໍ້ ຈາກຫົວຂໍ້ໜຶ່ງ ໄປຫາອີກຫົວຂໍ້ຕໍ່ໄປ. ສະເໜີໃຫ້ຜູ້ເຂົ້າຮ່ວມ ຊີ້ແຈງບາງຄຳເວົ້າທີ່ບໍ່ຈະແຈ້ງ ແລະ ຍັງເປັນທີ່ສົງໄສ. ກວມເອົາທຸກໆກຸ່ມ ແລະ ອະທິບາຍວ່າ ຄວາມຄາດຫວັງດັ່ງກ່າວອາດບັນລຸໄດ້ເຖິງລະດັບໃດ ໃນຊຸດຝຶກອົບຮົມຄັ້ງນີ້. ປົກກະ

ຕິແລ້ວ ຄວາມຄາດຫວັງຂອງຜູ້ເຂົ້າຮ່ວມສ່ວນຫລາຍ ອາດຈະສູງເກີນໄປ. ຕົວຢ່າງ: ຜູ້ປະກອບກິດຈະການແມ່ຍິງ ອາດ ຄາດຫວັງວ່າ ກຳໄລຂອງລາວຈະເພີ່ມຂຶ້ນ 10 ເທົ່າທັນທີໂລດ, ຫລື ຄູຝຶກທີ່ບໍ່ມີປະສົບການດ້ານ ທຸລະກິດເລີຍ ອາດຄາດຫວັງວ່າຈະເປັນຄູຝຶກຮອບດ້ານ ໃນດ້ານການພັດທະນາທຸລະກິດ. ໃນກໍລະນີນີ້, ອະທິບາຍເຖິງ ສິ່ງທີ່ຜູ້ເຂົ້າຮ່ວມສາມາດຄາດຫວັງໄດ້. ເນັ້ນໜັກວ່າ ຄວາມຄາດຫວັງຈະສາມາດບັນລຸໄດ້ ຈຸດໜັກກໍ່ຕໍ່ເມື່ອ ຜູ້ເຂົ້າຮ່ວມເອງ ພ້ອມກັນກັບອົງການຈັດຕັ້ງທ້ອງຖິ່ນຂອງເຂົາເຈົ້າ ຫ້າວຫັນ ແລະປະຕິບັດ ຕາມບົດຮຽນທີ່ໄດ້ ຮຽນມາພາຍຫລັງການຝຶກອົບຮົມສິ້ນສຸດລົງ (ເບິ່ງໝວດທີ 4).